ວິທີການປູກຜັກບົ້ງຈີນ

ໂດຍ:ພູທອນ ສົມມະວັນ,ສູນຂໍ້ມູນຂ່າວສານ

ຜັກບົ້ງຈີນ ເປັນພືທີ່ຄົນເຮົາມັກນິຍົມບໍລິໂພກຢູ່ໃນເຮືອນຄົວເປັນ ປະຈຳ ແລະ ເປັນຜັກທີ່ສາມາດປູກໄດ້ງ່າຍສາມາດປູກໄດ້ ຕະຫຼອດປີ

ການຕຽມດິນ

ເນື່ອງຈາກ ຜັກບົ້ງຈີນ ເປັນພືຜັກທີ່ມີລະບົບຮາກຕື້ນ ແລະ ອາຍຸເກັບກ່ຽວສັ້ນ.ການຕຽມດິນ ຄວນໄຖໃຫ້ເລິກປະມານ 10-15 ຊຕມ.ຕາດດິນໄວ້ປະມານ 10-15 ວັນ ,ແລ້ວໄຖພວນດິນໃຫ້ລະອຽດ.ຫຼັງຈາກເຮັດ ໜານຮຽບຮ້ອຍແລ້ວ ວ່ານປູນຂາວ ໃນອັດຕາ 100-300ກລ/1,600 ມ2 ໃສ່ຝຸ່ນຄອກ ຫຼືປຸຍມັກໃນ ອັດຕາ 2,000 ກລ/1,600 ມ2ປຸຍສູດ 15-15-15ອັດຕາ 30ກລ/1,600 ມ2,ຄົນໃຫ້ທົ່ວແລ້ວຍົກແປງປູກໃຫ້ສູງ ປະມານ 30 ຊຕມ,ກວ້າງ 120 ຕມ,ການຕຽມເມັດພັນ ຖ້າຕ້ອງ ການໃຫ້ເມັດພັນອອກໄວຂຶ້ນ ຄວນເອົາແກ່ນໄປແຊ່ນ້ຳ ປະມານ 4-6 ຊົ່ວໂມງກ່ອນນຳເມັດລົງວ່ານໃນໜານ

ວິທີການປູກ

ນິຍົມໃສ່ເມັດຫວ່ານລົງໃນໜານໂດຍໃຊ້ເມັດພັນ 13-15 ກິໂລ ກຼາມ/1,600 ມ2,ກ່ອນປູກຫົດນ້ຳໜານປູກໃຫ້ຊຸ່ມແລ້ວນຳເອົາເມັດ ຜັກບົ້ງຈີນມາຫວ່ານໃຫ້ກະຈາຍທົ່ວໜານ ຫຼືໃຊ້ເມັດໂຮຍໃຫ້ເປັນແຖວ ກໍ່ໄດ້.

ການບົວລະບັດຮັກສາການໃຫ້ນ້ຳ

ຜັກບົ້ງຈີນເປັນພືດທີ່ມັກດິນຊຸ່ມຊື່ນແຕ່ບໍ່ໃຫ້ມີນ້ຳຂັງ ຫົດນ້ຳໃຫ້ສະໝ່ຳສະເໝີວັນລະ 1-2 ຄັ້ງ ຍົກເວັ້ນຊ້ວງຝົນຕົກ ແລະຢ່າໃຫ້ຜັກບົ້ງຂາດນ້ຳ ເພາະຈະເຮັດໃຫ້ຜັກບົ້ງຢຸດການຈະເລີນເຕີບໂຕຕົ້ນແຂງ ກະດ້າງ ແລະ ບໍ່ໜ້າກິນ

ການໃສ່ປຸຍ

ຖ້າດິນມີຄວາມອຸດົມສົມບູນ ຫຼື ມີການໃສ່ປຸຍຢູ່ແລ້ວບໍ່ຈເປັນຕ້ອງໃສ່ປຸຍເຄມີແຕ່ຖ້າດິນບໍ່ສົມບູນຄວນໃຫ້ມີການໃສ່ຝຸ່ນຄອກ ຫຼື ປຸຍສູດ 46-0-0 ຫຼື ສູດ 25-7-7ອັດຕາ50ກລ/1,600 ມ2,ແບ່ງໃສ່ 2 ຄັ້ງຫຼັງຫວ່ານເມັດ 7 ວັນ ແລະ 15ວັນ

ການເກັບກ່ຽວ

ຫຼັງຈາກວ່ານເມັດລົງໜານປູກໄດ້ 20-25ວັນ ຜັກບົ້ງຈີນຈະເລີນເຕີບໂຕ ມີຄວາມສູງປະມານ 30-35 ຊຕມ.ໃຫ້ຖອນຕົ້ນຜັກບົ້ງຈີນອອກຈາກແປງປູກທັງຕົ້ນ ແລະ ຮາກ ຈາກນັ້ນລ້າງໃຫ້ສະອາດ ແລ້ວນຳໄປຕາກໄວ້